# ກຳມະບານທະນາຄານ
# ອວຍພອນການນຳຂັ້ນສູງສູນກາງສະຫະພັນກຳມະບານລາວ



ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສູນກາງສະຫະພັນກຳມະບານລາວ ຄົບຮອບ 56 ປີ ທີ່ຈະມາເຖິງນີ້ (1 ກຸມພາ 1956-1 ກຸມພາ 2012) ໃນວັນທີ 30 ມັງກອນ ຜ່ານມາ ທີ່ສຳນັກງານສູນກາງສະຫະພັນກຳມະບານລາວ ນະຄອນຫຼວງວຽງຈັນ ທ່ານ ຄຳຫຼ້າ ລໍລອນສີ ກຳມະການສູນກາງພັກ ປະທານສູນກາງສະຫະພັນກຳມະບານລາວ ໄດ້ໃຫ້ກຽດຕ້ອນຮັບການເຂົ້າ ອວຍພອນຂອງສະຫະພັນກຳມະບານທະນາຄານເຊິ່ງນຳໂດຍທ່ານນໍລະດີ ສີລັດຕະນະ ປະທານສະຫະພັນກຳມະບານທະນາຄານ.

ໃນໂອກາດອັນສະຫງ່າລາສີນີ້ ທ່ານ ນໍລະດີ ສີລັດຕະນະ ກໍໄດ້ຕາງໜ້າໃຫ້ຄະນະນຳທະນາຄານພ້ອມດ້ວຍພະນັກງານທະນາຄານທັງໝົດ ຂໍອວຍພອນໄຊອັນປະເສີດໃຫ້ການນຳຂັ້ນສູງຂອງສູນກາງສະຫະພັນກຳມະບານລາວຈົ່ງມີຄວາມຜາສຸກ-ມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນຊີວິດສ່ວນຕົວ ແລະ ໜ້າທີ່ວຽກງານ ພ້ອມນັ້ນກໍໄດ້ສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອມາຍັງຄະນະນຳສູນກາງສະຫະພັນກຳມະບານເຊິ່ງຍາມໃດກໍໄດ້ເປັນຫ່ວງເປັນໃຍ-ໃຫ້ທິດເຍື່ອງທາງ-ຊ່ວຍເຫຼືອອູ້ມຊູສະຫະພັນກຳມະບານທະນາຄານໂດຍຕະຫຼອດມາ.

ຈາກນັ້ນທ່ານປະທານສູນກາງສະຫະພັນກຳມະບານລາວ ກໍໄດ້ໃຫ້ກຽດໂອ້ລົມກັບຄະນະສະຫະພັນກຳມະບານທະນາຄານດ້ວຍຄວາມອົບອຸ່ນສາມັກຄີຮັກແພງ.